ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 17 ຫາ 21 ກຸມພາ 2025



ປູກມັນດ້າງ ເປັນສິນຄ້າ ເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



ພາບ-ຂ່າວໂດຍ: ໜັງສືພິມປະຊາຊົນ

ທ່ານ ນາລອນ ໂພທິສານ ອາຍຸ 46 ປີ, ອາຊີບ ຊາວສວນ ຢູ່ບ້ານແກ້ງເກ່າ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ເປັນຄອບຄົວຕົວແບບ ໃນການປູກ ມັນດ້າງເປັນສິນຄ້າ ເປັນເວລາ 10 ກວ່າປີ ສາມາດ ເຮັດໃຫ້ຄອບຄົວ ໄດ້ຮັບການພັດທະນາ, ຊີວິດການ ເປັນຢູ່ນັບມື້ດີຂຶ້ນ. ໂດຍທ່ານໄດ້ໃຫ້ສຳພາດໃນວັນທີ 13 ມັງກອນ 2025 ນີ້ວ່າ: ຄອບຄົວຂອງຂ້າພະເຈົ້າ ມີທັງໝົດ 5 ຄົນ ຍິງ 3 ຄົນ, ແຮງງານຕົ້ນຕໍ 2 ຄົນ. ແຕ່ກ່ອນມີອາຊີບຄ້າຂາຍ ແລະ ຮັບຈ້າງແກ່ກ້ວຍ, ລາຍຈ່າຍປະຈຳວັນມີຫຼາຍ ແຕ່ລາຍຮັບພັດມີໜ້ອຍ ຈຶ່ງເຮັດໃຫ້ຊີວິດການເປັນຢູ່ມີຄວາມຫຍຸ້ງຍາກຂາດ ເຂີນ, ບໍ່ມີເງິນສະສົມສຳຮອງຂອງຄອບຄົວ. ຍ້ອນ ແນວນັ້ນ, ຂ້າພະເຈົ້າພ້ອມດ້ວຍຄອບຄົວ ຈຶ່ງຊອກຫາ ອາຊີບເສີມອື່ນທີ່ສາມາດເຮັດໄດ້. ຕໍ່ມາ ກໍໄດ້ຕັດສິນ ໃຈລອງປູກມັນດ້າງ ເພາະວ່າໃນຄອບຄົວ ມີເນື້ອທີ່ ດິນຈຳນວນ 20 ເຮັກຕາ ທັງເປັນການປະຕິບັດຕາມ ແນວທາງນະໂຍບາຍຂອງພັກ - ລັດທີ່ປຸກລະດົມໃຫ້ ປະຊາຊົນທຳການຜະລິດ, ປູກຝັງ - ລ້ຽງສັດ ເປັນ ສິນຄ້າ ເພື່ອພັດທະນາຊີວິດການເປັນຢູ່ຂອງຄອບຄົວ ໂດຍເລີ່ມປູກມັນດ້າງ ໃນປີ 2010, ປູກປີທຳອິດ ເຫັນ ວ່າມີຄວາມຫຍຸ້ງຍາກ ເພາະວ່າລົງທຶນຫຼາຍ ໂດຍ ສະເພາະແມ່ນການຈ້າງລົດໄຖດິນສວນ ເພື່ອປູກມັນ ດ້າງ, ຄວາມຮູ້ໃນການປູກ ກໍບໍ່ມີ ເພາະບໍ່ໄດ້ສຶກສາ ຮ່ຳຮຽນ ພຽງແຕ່ຮຽນຮູ້ຈາກຜູ້ທີ່ເຄີຍປູກມາກ່ອນ, ປູກ ໄປນຳຖອດຖອນບົດຮຽນພ້ອມ. ແຕ່ກໍໄດ້ບຸກບືນສູ້ ຊົນປູກມັນດ້າງມາເລື້ອຍໆເພາະເຫັນວ່າ ມັນດ້າງ ເປັນລາຄາ, ມີຕະຫຼາດຮອງຮັບ ທັງຕະຫຼາດພາຍໃນ ແລະ ຕ່າງປະເທດ. ປີຕໍ່ມາລາຍຮັບກໍຄ່ອຍເພີ່ມຂຶ້ນ, ສາມາດຊື້ພາຫານະ ແລະ ລົດໄຖໃຫຍ່ ເພື່ອມາຮັບ ໃຊ້ແກ່ການຜະລິດ. ໄລຍະການປູກມັນຕົ້ນແຕ່ລະ ປີແມ່ນບໍ່ແນ່ນອນ ໂດຍອີງຕາມສະພາບຟ້າຝົນໃນ ແຕ່ລະປີ, ບາງປີຝົນຕົກໄວ ກໍເລີ່ມປູກແຕ່ເດືອນທີ 6, ບາງປີ ກໍເດືອນທີ 7, ບາງປີ ກໍເດືອນທີ 8, ໄລຍະການ ປູກ 4 ເດືອນ ແມ່ນເກັບກູ້ ເພາະຫົວມັນຈະໃຫຍ່, ຖ້າ ກາຍ 4 ເດືອນ ຫົວມັນຈະເປັນແມງ, ບໍ່ມີໃຜຊື້. ການ ປູກ ແລະ ເກັບກູ້ ແມ່ນໄດ້ຈ້າງພະນັກງານ, ຮອດປີ 2022 ຕົນ ແລະ ຄອບຄົວມີລາຍຮັບຈາກການຂາຍ ຜົນຜະລິດທັງໝົດແມ່ນ 1 ຕື້ກີບ, ສະເລ່ຍໃສ່ຄົນໃນ



ຄອບຄົວແມ່ນ 200 ລ້ານກີບ/ຄົນ/ປີ.

ທ່ານ ນາລອນ ໂພທິສານ ກ່າວຕື່ມວ່າ: ປັດຈຸບັນນີ້ສະພາບການເປັນຢູ່ຂອງຄອບຄົວຂ້າພະເຈົ້ານັບມື້ດີຂຶ້ນເປັນກ້າວໆ, ມີເຮືອນຢູ່ແໜ້ນໜາຖາວອນ, ມີລົດໄຖຂະໜາດໃຫຍ່ 3 ຄັນ ແລະ ອື່ນໆ. ສັງລວມແລ້ວຄວາມອຸດົມສົມບູນຂອງຄອບຄົວຂ້າພະເຈົ້າແມ່ນໄດ້ມາຈາກການປູກມັນດ້າງ ແລະ ຍ້ອນມີການນຳພາ - ຊີ້ນຳຂອງພັກ-ລັດ ເວົ້າລວມ, ເວົ້າສະເພາະແມ່ນຄະນະພັກ - ອົງການປົກຄອງເມືອງບາຈຽງຈະເລີນສຸກ ແລະ ພະນັກງານວິຊາການຫ້ອງການກະສິກຳ ແລະ ປ່າໄມ້ເມືອງທີ່ໄດ້ຊີ້ນຳໃຫ້ເຫັນຊ່ອງທາງອຸດົມການທີ່ຖືກຕ້ອງ, ສາມາດເຮັດໃຫ້ຄອບຄົວຂ້າພະເຈົ້າຫຼຸດພົ້ນອອກຈາກຄວາມທຸກຍາກໄດ້.

ທ່ານ ນາລອນ ໂພທິສານ ຍັງໄດ້ກ່າວຕື່ມອີກວ່າ: ໃນຕໍ່ໜ້ານີ້ ຄອບຄົວຂອງຂ້າພະເຈົ້າ ຍັງຈະສືບຕໍ່ປູກມັນດ້າງ ເປັນສິນຄ້າ ເພື່ອສ້າງເສດຖະກິດ ເພື່ອພັດທະນາຊີວິດການເປັນຢູ່ຂອງຄອບຄົວໃຫ້ຈະເລີນກ້າວໜ້າຂຶ້ນໄປເລື້ອຍໆ. ສ່ວນວ່າ ຈະປູກຫຼາຍ ຫຼື ປູກໜ້ອຍ ແມ່ນອີງໃສ່ສະພາບຄວາມຕ້ອງການມັນດ້າງຂອງຕະຫຼາດໃນແຕ່ລະໄລຍະ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;